ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 1757 /ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 13 ຕຸລາ 2023

# ແຈ້ງການ

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ

- ເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

ເລື່ອງ: ຢຸດເຊົາການສົ່ງສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ຂະແໜງສ່ວຍສາອາກອນ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ສະບັບເລກທີ 1752/ອຄ, ລົງວັນທີ 19 ກັນຍາ 2016;
- ອີງຕາມແຈ້ງການ, ເລື່ອງ ການຮັບຮອງຈົດທະບຽນເລກປະຈຳຕົວຜູ້ເສຍອາກອນ ເຂົ້າໃນລະບົບ TaxRis ແລະ ການເຂົ້າລະບົບອາກອນມູນຄ່າເພີ່ມ ສະບັບເລກທີ 1004/ກທຄວ, ລົງວັນທີ 19 ພະຈິກ 2021;
- ອີງຕາມ ບົດບັນທຶກກອງປະຊຸມ ລະຫວ່າງກົມສ່ວຍສາອາກອນ ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ສະບັບລົງວັນທີ 10 ຕຸລາ 2023.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງລາຍລະອຽດລຸ່ມນີ້:

1. ຢຸດເຊົາການສົ່ງສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດລະບົບເຈ້ຍ ໃຫ້ຂະແໜງສ່ວຍສາອາກອນ ທັງນີ້ກໍເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ, ເວລາ ແລະ ແຮງງານພະນັກງານສົ່ງເອກະສານ ເນື່ອງຈາກລະບົບກໍ່ໄດ້ມີການເຊື່ອມຖານຂໍ້ມູນຮ່ວມກັນແລ້ວ;

2. ເພື່ອແນໃສ່ ການແກ້ໄຂບັນຫາໂຕເລກວິສາຫະກິດ ແລະ ໂຕເລກອາກອນບໍ່ກົງກັນ, ຫັນເປັນທັນສະໄໝ, ຫັນເລກລະຫັດວິສາຫະກິດ ແລະ ເລກປະຈຳຕົວຜູ້ເສຍອາກອນເປັນຕົວເລກດຽວກັນ ແລະ ສ້າງເງື່ອນໄຂໃນການແຈ້ງຂຶ້ນທະບຽນວິສາຫະກິດທາງເອເລັກໂຕຣນິກ ໃນອະນາຄົດ. ພາຍຫລັງທີ່ເຈົ້າໜ້າທີ່ທະບຽນວິສາຫະກິດຂອງຂະແໜງອຸດສາຫະກຳ ແລະ ການຄ້າ ອອກໃບທະບຽນວິສາຫະກິດແລ້ວ, ເຈົ້າໜ້າທີ່ຂອງຂະແໜງສ່ວຍສາອາກອນ ຈະກົດຢືນຢັນຮັບເອົາວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດແລ້ວ ເຂົ້າສູ່ລະບົບ TaxRis ເລີຍ ທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໂດຍບໍ່ຈຳເປັນລໍຖ້າໃຫ້ວິສາຫະກິດໄປປະສານເອງອີກ;

3. ແຈ້ງການສະບັບນີ້ລົບລ້າງ ຂໍ້ທີ 3 ຂອງແຈ້ງການ ເລື່ອງ: ການຮັບຮອງຈົດທະບຽນເລກປະຈຳຕົວຜູ້ເສຍອາກອນ ເຂົ້າລະບົບ TaxRis ແລະ ການເຂົ້າລະບົບອາກອນມູນຄ່າເພີ່ມ, ສະບັບເລກທີ 1004/ກທຄວ, ລົງວັນທີ 19 ພະຈິກ 2021;

4. ໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ວັນທີ 16 ຕຸລາ 2023 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ເຊັນແທນຫົວໜ້າກົມ
ຮອງຫົວໜ້າກົມ

ວັນມີໄຊ ດວງພະຈັນ
Vanhmixay DOUANGPHACHANH

ພະແນກບໍລິການຂຶ້ນທະບຽນວິສາຫະກິດ
ຕິດຕໍ່: 021 412011, 020 2998 4579

CamScanner